# ການກວດມະເຮັງແບບຄັດກອງແມ່ນຫຍັງ?

## ການກວດຄັດກອງເປັນສ່ວນນຶ່ງທີ່ສຳຄັນໃນການດູແລສຸຂະພາບຂອງທ່ານ

NSW GOVERNMENT

ການກວດຫາມະເຮັງແບບຄັດກອງກ່ຽວຂ້ອງກັບການກວດແບບງ່າຍໆທີ່ຊອກຫາອາການເບື້ອງຕົ້ນຂອງມະເຮັງ, ຫຼືເງື່ອນໄຂທີ່ເຮັດໃຫ້ເກີດມະເຮັງ. ການກວດຄັດກອງສາມາດຊອກຫາມະເຮັງໄດ້ ກ່ອນທີ່ທ່ານຈະສາມາດເຫັນ ຫຼື ຮູ້ສຶກວ່າມີການປ່ຽນແປງໃດໆໃນຮ່າງກາຍຂອງທ່ານ. ເມື່ອທ່ານພົບມະເຮັງໄວ, ມັນກໍງ່າຍຕໍ່ການປິ່ນປົວທີ່ໄດ້ຜົນ.

ໃນອອສເຕຣເລັຍ ມີ ໂຄງການກວດຄັດກອງລະດັບຊາດສາມໂຄງການ. ໂຄງການເຫຼົ່ານີ້ແມ່ນສຳລັບມະເຮັງເຕົ້ານົມ, ລຳໄສ້ແລະປາກມົດລູກ.

## ການກວດເຕົ້ານົມ

ມະເຮັງເຕົ້ານົມແມ່ນມະເຮັງທີ່ພົບເລື້ອຍທີ່ສຸດໃນຜູ້ຍິງ

- ຜູ້ຍິງອາຍຸ 50-74 ປີຄວນກວດແມມໂມແກຣມ (ຫຼືຍັງເອີ້ນອີກຢ່າງນຶ່ງວ່າ ເອັກສະເຣເຕົ້ານົມ) ທຸກໆສອງປີ.
- ການ ກວດແມມໂມແກຣມ ເປັນວິທີທີ່ດີທີ່ສຸດທີ່ຈະຊອກຫາມະເຮັງເຕົ້ານົມກ່ອນທີ່ຈະສາມາດເບິ່ງເຫັນ ຫຼື ສຳຜັດໄດ້.
- ມັນເປັນສິ່ງສຳຄັນສຳລັບຜູ້ຍິງທຸກຄົນທີ່ມີອາຍຸ 50-74 ປີໃນການກວດຄັດກອງ, ເພາະວ່າຜູ້ຍິງສ່ວນໃຫຍ່ທີ່ຖືກກວດພົບວ່າເປັນມະເຮັງເຕົ້ານົມນັ້ນ ບໍ່ມີປະຫວັດຂອງໂຣກນີ້ໃນຄອບຄົວ.
- ເຮັດແມມໂມແກຣມ ກັບ BreastScreen NSW ແມ່ນ**ຟຣີ**. ບໍ່ຈຳເປັນ ຕ້ອງມີການແນະນຳສົ່ງຕໍ່ຈາກນາຍໝໍ.

### ສິ່ງທີ່ຕ້ອງເຮັດ

- ເພື່ອນັດໝາຍໃຫ້ໂທຫາ **13 20 50** ຫຼືເຂົ້າໄປທີ່ **book.breastscreen.nsw.gov.au**
- ໂທຫາ **13 14 50** ເພື່ອເວົ້າກັບນາຍພາສາ.
- ສຳລັບຂໍ້ມູນເພີ່ມເຕີມໃນພາສາອື່ນໆ, ກະລຸນາເຂົ້າໄປທີ່ **breastscreen.nsw.gov.au**

## ກວດລຳໄສ້

9 ໃນ 10 ມະເຮັງລຳໄສ້ສາມາດປິ່ນປົວໄດ້ຜົນສຳເລັດຖ້າຫາກວ່າຖືກພົບເຫັນແຕ່ຕົ້ນໆ.

- ຜູ້ຊາຍ ແລະ ຜູ້ຍິງ ອາຍຸ 50–74 ປີ ທີ່ມີບັດ Medicare ຫຼື Department of Veterans Affairs ຈະໄດ້ຮັບຊຸດກວດໂຣກມະເຮັງລຳໄສ້ **ຟຣີ** ທາງໄປສະນີທຸກໆສອງປີ.
- ການກວດຄັດກອງມະເຮັງລຳໄສ້ສາມາດຊ່ວຍຊີວິດຂອງທ່ານໄດ້ ເພາະວ່າມັນເປັນວິທີທີ່ດີທີ່ສຸດໃນການກວດຫາມະເຮັງລຳໄສ້ແຕ່ຕົ້ນໆ.
- ການກວດຄັດກອງມະເຮັງລຳໄສ້ເຮັດໄດ້ໄວ ແລະງ່າຍຢູ່ເຮືອນຂອງທ່ານເອງ.

### ສິ່ງທີ່ຕ້ອງເຮັດ

- ໃຊ້ຊຸດກວດລຳໄສ້ຂອງທ່ານເມື່ອມັນມາຮອດທາງໄປສະນີ.
- ເຂົ້າໄປທີ່ **dothetest.com.au** ເພື່ອກວດເບິ່ງວ່າຊຸດຕໍ່ໄປຂອງທ່ານຈະຖືກສົ່ງໄປຫາທ່ານເມື່ອໃດ.
- ໂທຫາ **1800 627 701** ສຳລັບການສອບຖາມອື່ນໆ.
- ໂທຫາ **13 14 50** ເພື່ອເວົ້າກັບນາຍພາສາ.
- ສຳລັບຂໍ້ມູນເພີ່ມເຕີມໃນພາສາອື່ນ, ກະລຸນາເຂົ້າໄປທີ່ **health.gov.au/resources/translated**

## ການກວດຄັດກອງປາກມົດລູກ

ການກວດຄັດກອງປາກມົດລູກສາມາດປ້ອງກັນມະເຮັງປາກມົດລູກໄດ້

- ຜູ້ຍິງອາຍຸ 25-74 ປີຄວນກວດຄັດກອງປາກມົດລູກທຸກໆຫ້າປີ.
- ທ່ານສາມາດຈອງການກວດຄັດກອງປາກມົດລູກກັບນາຍໝໍ ຫຼື ພະຍາບານທ້ອງຖິ່ນຂອງທ່ານ.
- ນາຍໝໍບາງຄົນທຳການກວດນີ້ໂດຍ**ບໍ່ເສັຍຄ່າ**. ທ່ານສາມາດຖາມກ່ຽວກັບຄ່າໃຊ້ຈ່າຍ ນີ້ໄດ້ໃນເວລາທີ່ທ່ານຈອງນັດຫມາຍ.
- ມະເຮັງປາກມົດລູກສາມາດປ້ອງກັນໄດ້ໂດຍການການກວດຄັດກອງປາກມົດລູກ. ອັນນີ້ແມ່ນຍ້ອນວ່າມັນຊອກຫາການຕິດເຊື້ອທີ່ເອີ້ນວ່າ human papillomavirus (HPV), ເຊິ່ງກໍ່ໃຫ້ເກີດມະເຮັງປາກມົດລູກ.

### ສິ່ງທີ່ຕ້ອງເຮັດ

- ໂທຫາ **1800 627 701** ເພື່ອກວດເບິ່ງເວລານັດໄປເຮັດການກວດຄັດກອງປາກມົດລູກຄັ້ງຕໍ່ໄປຂອງທ່ານ.
- ນັດໝາຍກັບນາຍໝໍ ຫຼືພະຍາບານ. ທ່ານສາມາດຂໍເອົາທ່ານໝໍຫຼືພະຍາບານຍິງເພື່ອເຮັດການກວດນີ້.
- ໂທຫາ **13 14 50** ເພື່ອເວົ້າກັບນາຍພາສາ.
- ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າໄປທີ່ **cancer.nsw.gov.au/cervical** ຫຼື **cancerscreening.gov.au/cervical**

**Cancer Institute NSW** | cancer.nsw.gov.au

**t** +61 (0)2 8374 5600 **f** +61 (0)2 8374 3600 **e** information@cancer.nsw.gov.au

SHPN: (CI) 211168-6 CI-0222-12.21 © Cancer Institute NSW 2022